ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດລາຍງານ

# ການຈັດຕັ້ງປະຕິບັດ ແລະ ຄວາມຄືບໜ້າ ຂອງໂຄງການ ປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ

## ເມືອງ ຮ້ຽມ ສົກປີ 2103 - 2014





## V. ການຈັດຕັ້ງປະຕິບັດໂຄງການຜ່ານມາ.

ໃນເບື້ອງຕົ້ນໂຄງການ ປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນດ້ານໂພຊະນາການ (LONG) ເມືອງ ຮ້ຽມ ໄດ້ທົດລອງຈັດຕັ້ງປະຕິບັດຢູ່ 2 ກຸ່ມບ້ານ , ກວມເອົາ 4 ບ້ານ ຄື: ກຸ່ມ ສາກົກ ມີ: ບ້ານ ສາກົກ ແລະ ບ້ານ ດອນຄູນ, ກຸ່ມ ທາດຮ້ຽມມີ:ບ້ານ ຫ້ວຍສາ ແລະ ບ້ານ ແທ່ນຮີ້ງ ,ຊຶ່ງ ລວມມີ 2 ກິດຈະກຳຫຼັກຄື: ກິດຈະກຳປັ້ບປຸງຊີວິດການເປັນຢູ່ມີ 2 ກິດຈະກຳ ຄື : ກິດຈະກຳລ້ຽງສັດນ້ອຍ, ກິດຈະກຳຕຳຫູກ ແລະ ກິດຈະກຳໂພຊະນາການມີ 4 ກິດຈະກຳ : ກິດຈະກຳສ້າງສູນໂພຊະນາການ, ເຮັດສວນຄົວ,ປຸງແຕ່ງອາຫານກາງວັນ ແລະ ກິດຈະກຳສ້າງລາຍຮັບ, ມີ ສູນໂພຊະນາການ 4 ສູນ, ມີກຸ່ມ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ 14 ກຸ່ມ,ມີສະມາຊິກທັງໝົດ 235 ຄົນ, ຍິງ 112 ຄົນ ປະຈຸບັນກຳລັງຂະຫຍາຍບ້ານຕື່ມ 12 ບ້ານ ມີ 38 ກຸ່ມ ກຊກ, ມີ ກຸ່ມຍິງລ້ວນ 31 ກຸ່ມ, ມີສະມາຊິກທັງໝົດ 537 ຄົນ, ຍິງ 351 ຄົນ. ເມືອງຮ້ຽມ ລວມມີ 16 ບ້ານ , ມີ 52 ກຸ່ມ ກຊກ, ສະມາຊິກ 771 ຄົນ, ຍິງ 463 ຄົນ.

ປະຈຸບັນກຳລັງຂະຫຍາຍບ້ານຕື່ມອີກ 4 ບ້ານໄດ້ຈັດກອງປະຊຸມວາງແຜນພັດທະນາຂັ້ນບ້ານ(PRA) ສຳເລັດແລ້ວ , ມີ 14 ກຸ່ມ ກຊກ , ມີສະມາຊິກ 168 ຄົນ, ຍິງ 97 ຄົນ (ຊ່ວງໄລຍະທ້ອນເງິນຝາກ).

## 1/. ວຽກງານຈັດຕັ້ງ-ນະໂຍບາຍພະນັກງານ.

ໂຄງການ ຄປພ ປະກອບມີພະນັກງານຂັ້ນເມືອງ ແລະ ຂັ້ນກຸ່ມ ບ້ານ, ຊຶ່ງຂັ້ນເມືອງ ປະກອບມີ 3 ຕຳແໜ່ງງານ ຄື: ຜູ້ປະສານງານຂັ້ນເມືອງ 1 ທ່ານ, ວິຊາການດ້ານປັບປຸງຊີວິດການເປັນຢູ່ 1 ທ່ານ, ວິຊາການດ້ານໂພຊະນາການ ແລະ ບໍລິຫານການເງິນ 1 ທ່ານ ແລະ ມີພະນັກງານປະຈຳກຸ່ມບ້ານແຕ່ລະກຸ່ມ ໃນນັ້ນຖ້າຫາກວ່າກຸ່ມບ້ານໃດ ມີບ້ານເປົ້າໝາຍ 7 ບ້ານ ລົງມາແມ່ນພະນັກງານປະຈຳຢູ່ 2 ຄົນ, ຖ້າຫາກວ່າມີບ້ານເປົ້າໝາຍ 8 ບ້ານຂຶ້ນໄປແມ່ນມີພະນັກງານປະຈຳກຸ່ມ 4 ຄົນ,(1 ຄົນ ຕໍ່ 4ບ້ານ) ຊຶ່ງ ພະນັກງານດັ່ງກ່າວ ຕ້ອງມີວິຊາການດ້ານປັບປຸງຊີວິການເປັນຢູ່ ແລະ ວິຊາການດ້ານໂພຊະນາການ ຕາມຄວາມຮັບຜິດຊອບຂອງໃຜມັນ.

ຜ່ານມາມີພະນັກງານລາອອກມີດັ່ງນີ້:

1. ຫົວໜ້າປະສານງານຂັ້ນເມືອງ 1 ທ່ານ (ເຮັດທຸລະກິດສ່ວນຕົວ)
2. ພະນັກງານກຸ່ມບ້ານ 4 ຄົນ (ໄປເຮັດວຽກນຳຝ່າຍລັດ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຮ້ຽມ,ຊ່ອນ).
3. ພະນັກງານກຸ່ມບ້ານ 1 ຄົນ (ໄປເຮັດວຽກຢູ່ຫ້ອງການໄປສະນີເມືອງ ຮ້ຽມ).

☞ ລວມທັງໝົດ: 6 ຄົນ , ຍິງ 2 ຄົນ (ໄດ້ສືບຕໍ່ ປະກາດຮັບສະໝັກພະນັກງານ)

ປະຈຸບັນເມືອງຮ້ຽມມີພະນັກງານທັງໝົດ 10 ຄົນ, ຍິງ 6 ຄົນ (ກຳລັງປະກາດຮັບພະນັກງານອີກ 1 ຕຳແໜ່ງ ຂັ້ນເມືອງ).

- ຕິດຕາມການລາພັກປະຈຳປີ ແລະ ປິ່ນປົວສຸຂະພາບຕາມລະບຽບການ ແລະ ນະໂຍບາຍຂອງ ທລຍ ໄດ້ທັງໝົດ 7 ເທື່ອຄົນ.

## 2/. ວຽກງານ ພົວພັນກັບຂະແໜງການທີ່ກ່ຽວຂ້ອງ.

- ຜ່ານມາຂອດປະສານງານກັບຂະແໜງການທີ່ກ່ຽວຂ້ອງຂອງລັດແມ່ນໄດ້ເຮັດປົກກະຕິເຊັ່ນ: ຫ້ອງການສາທາລະນະສຸກ, ພັດທະນາຊົນນະບົດ, ກະສິກຳ ແລະ ປ່າໄມ້ ເມືອງເປັນຕົ້ນແມ່ນ ວຽກງານແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນຢູ່ບ້ານເປົ້າໝາຍ.
- ໄດ້ເຂົ້າຮ່ວມຂະບວນການຕ່າງໆຂອງພາກລັດຢ່າງປົກກະຕິ.(ວຽກງານອົງການຈັດຕັ້ງມະຫາຊົນ).
- ນຳພາການນຳເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງລົງໂອ້ລົມພໍ່ແມ່ປະຊາຊົນບ້ານເປົ້າໝາຍເພື່ອເຮັດໃຫ້ຊາວບ້ານເຂົ້າໃຈເຊື່ອມຊຶມກັບວຽກງານ ໂຄງການ ຄປພ ໄດ້ ຫຼາຍຄັ້ງ.

## V. ໜ້າວຽກປັບປຸງຊີວິດການເປັນຢູ່ຜ່ານມາ.

### 1.1 ວຽກງານຝຶກອົບຮົມ.

- ໄດ້ຝຶກອົບຮົມກິດຈະກໍາ ລ້ຽງໄກ່ ໄດ້ 5 ຄັ້ງ ມີຜູ້ເຂົ້າຮ່ວມ 88, ຍິງ 18 ຄົນ.
- ຝຶກອົບຮົມ ກິດຈະກໍາ ລ້ຽງ ແບ້ ໄດ້ 1 ຄັ້ງ ມີຜູ້ເຂົ້າຮ່ວມ 20 ຄົນ, ຍິງ 1 ຄົນ.
- ຝຶກອົບຮົມ ກິດຈະກໍາ ລ້ຽງ ໝູ ໄດ້ 3 ຄັ້ງ ມີຜູ້ເຂົ້າຮ່ວມ 45 ຄົນ, ຍິງ 7 ຄົນ.
- ຝຶກອົບຮົມ ກິດຈະກໍາ ລ້ຽງປາ ໄດ້ 2 ຄັ້ງ ມີຜູ້ເຂົ້າຮ່ວມ 25 ຄົນ, ຍິງ 2 ຄົນ.
- ຝຶກອົບຮົມ ກິດຈະກໍາ ຕໍ່າຫູກ ໄດ້ 3 ຄັ້ງ ມີຜູ້ເຂົ້າຮ່ວມ 55 ຄົນ, ຍິງ 55 ຄົນ.

### 1.2 ວຽກງານ ຝຶກອົບຮົມດ້ານ ວິຊາການ.

- ຝຶກອົບຮົມ ການປຸງແຕ່ງອາຫານ ທີ່ວຽງຈັນ 1 ຄັ້ງ (ພ/ງທັງໝົດ).
- ຝຶກອົບຮົມ ວິທີການ ສ້າງຕັ້ງກຸ່ມ ກຊກ 1 ຄັ້ງ (ພ/ງທັງໝົດ).
- ຝຶກອົບຮົມ ການເປັນຜູ້ອໍານວຍຄວາມສະດວກແກ່ຊຸມຊົນ 1 ຄັ້ງ (ພ/ງທົງໝົດ).
- ຝຶກອົບຮົມ ການທ້ອນເງິນຝາກ 1 ຄັ້ງ (ພ/ງທົງໝົດ).

### 1.3 ວຽກງານປ້ອງກັນ ແລະ ປິ່ນປົວສັດ.

- ສັກຢາປ້ອງກັນພະຍາດສັດໄດ້ 9 ຄັ້ງ ໄດ້ທັງໝົດ 1,852 ໂຕ (ລວມສັດທຸກຊະນິດ).
- ປິ່ນປົວສັດຕິດພະຍາດ ໄດ້ 3 ຄັ້ງ ໄດ້ທັງໝົດ 135 ໂຕ (ລວມສັດທຸກຊະນິດ).

### 1.4 ວຽກງານກໍ່ສ້າງນັກພັດທະນາກອນຂັ້ນບ້ານ.

- ສາມາດສ້າງຄອບຄົວຕົວແບບການລ້ຽງໄກ່ລາດ ໄດ້ 3 ຄອບຄົວ (ບ້ານ ຫ້ວຍສາ).
- ສາມາດສ້າງເປັນຄູຝຶກດ້ານການຕໍ່າຫູກສິ້ນໝີ່ ໄດ້ 5 ຄົນ ( ບ້ານ ສາກົກ).

## 1.4 ວຽກງານ ການປ່ອຍທຶນໝູນວຽນ.

- ເບື້ອງຕົ້ນໂຄງການ ຄປພ ໄດ້ທົດລອງດຳເນີນ ຢູ່ 4 ບ້ານເປົ້າໝາຍ ,ມີ 14 ກຸ່ມ ກຊກ , ສະມາຊິກທັງໝົດ 235 ຄົນ, ຍິງ 112 ຄົນ ໄດ້ ປ່ອຍທຶນ ໝູນວຽນ ( ຕົ້ນທຶນ ) 242 ລ້ານ ກວ່າ ກີບ.
- ກຳລັງກະກຽມຂຽນບົດສະເໜີໂຄງການຍ່ອຍເພື່ອຂໍທຶນຊ່ວຍເຫຼືອ ຂອງ 12 ບ້ານຂະຫຍາຍໃໝ່ ຈຳນວນເງິນປະມານ 558,480,000 ລ້ານກີບ.
- ກະກຽມເກັບກູ້ທຶນໝູນວຽນຮອບທີ1 ແລະ ສືບຕໍ່ປ່ອຍທຶນໝູນວຽນ ຮອບທີ 2 ຂອງ 4 ບ້ານທົດລອງເກົ່າ.

# VI. ຜົນໄດ້ຮັບຂອງວຽກງານປັງປຸງຊີວິດການເປັນຢູ່.

| ລ/ດ | ຊື່ບ້ານ | ຊື່ກຸ່ມ | ຊື່ ກິດຈະກຳ | ຈ/ນສະມາຊິກ | ການລົງທຶນໃນເບື້ອງຕົ້ນ | ຜົນໄດ້ຮັບແຕ່ຕົ້ນເຖິງປະຈຸບັນ(ສະເລ່ຍ) | ຈ/ນຂາຍ ອອກ ແລະ ບໍລິໂພກ | ຈ/ນສັດຍັງເຫຼືອຕົວຈິງ (ສະເລ່ຍ) | ເປັນເງິນ(ກີບ) | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| 1 | ສາ ກົກ | ຈະເລີນໄຊ | ລ້ຽງປາ | 17 | 80 kg | 1,209 kg | 820 kg | 389 kg | 24,600,000 | ຂາຍເປັນ kg (30,000 ກີບ) |
| | | ສູ້ຊົນ | ລ້ຽງໄກ່ 1 | 18 | 450 ໂຕ | 2,400 ໂຕ | 1,401 kg | 648ໂຕ | 56,040,000 | ຂາຍເປັນ kg ( 40,000 ກີບ) |
| | | ພັດທະນາ | ລ້ຽງໄກ່ 2 | 18 | 451 ໂຕ | 2,310 ໂຕ | 1,325kg | 653 ໂຕ | 53,000,000 | ຂາຍເປັນ kg (40.000 ກີບ) |
| | | ເສີມສ້າງ | ຕໍ່າຫູກ | 17 | 17 ເຄືອ | 846 ຜືນ | 840 ຜືນ | 6 ຜືນ | 54,000,000 | 1 ຜືນ 65,000 ກີບ |
| ລວມ: | | | | | | | | | 187,640,000 | |

| ລ/ດ | ຊື່ບ້ານ | ຊື່ກຸ່ມ | ຊື່ກິດຈະກຳ | ຈ/ນສະມາຊິກ | ການລົງທຶນໃນເບື້ອງຕົ້ນ | ຜົນໄດ້ຮັບແຕ່ຕົ້ນເຖິງປະຈຸບັນ(ສະເລ່ຍ) | ຈ/ນຂາຍອອກ ແລະ ບໍລິໂພກ | ຈ/ນສັດຍັງເຫຼືອຕົວຈິງ | ເປັນເງິນ(ກີບ) | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| 2 | ດອນ ຄູນ | ຈະເລີນພັນ | ລ້ຽງແບ້ | 20 | 20 ໂຕ | 84 ໂຕ | 14 ໂຕ | 70ໂຕ | 14,000,000 | ຂາຍເປັນ ໂຕ (1,000,000ກີບ) |
| | | ແສງຮຸ່ງ | ລ້ຽງໄກ່ | 20 | 500 ໂຕ | 1,513 ໂຕ | 1,032kg | 481ໂຕ | 33,024,000 | ຂາຍເປັນ kg |
| | | ປະຊາສຳພັນ | ລ້ຽງໝູ | 20 | 20 ໂຕ | 113 ໂຕ | 91 ໂຕ | 23 ໂຕ | 40,950,000 | ຂາຍເປັນ ໂຕ (450,000 ກີບ) |
| | | ພົວພັນ | ຕ່ຳຫູກ | 19 | 19 ເຄືອ | 231 ຜືນ | 214 ຜືນ | 17 ຜືນ | 13,910,000 | 1 ຜືນ 65,000 ກີບ |
| ລວມ: | | | | | | | | | 101,884,000 | |

| ລ/ດ | ຊື່ບ້ານ | ຊື່ກຸ່ມ | ຊື່ ກິດຈະກຳ | ຈ/ນສະມາຊິກ | ການລົງທຶນໃນເບື້ອງຕົ້ນ | ຜົນໄດ້ຮັບແຕ່ຕົ້ນເຖິງປະຈຸບັນ(ສະເລ່ຍ) | ຈ/ນຂາຍອອກ ແລະ ບໍລິໂພກ | ຈ/ນສັດຍັງເຫຼືອຕົວຈິງ | ເປັນເງິນ(ກີບ) | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| 3 | ແທ່ນຮົ້ງ | ສາຍຫ້ວຍເລາະ | ລ້ຽງໝູ | 18 | 16 ໂຕ | 79 ໂຕ | 41 ໂຕ | 38 ໂຕ | 18,450,000 | ຂາຍເປັນ ໂຕ (450,000 ກີບ) |
| | | ສາຍພູຫຼວງ | ລ້ຽງໄກ່ | 17 | 425 ໂຕ | 1,503 ໂຕ | 763 kg | 549ໂຕ | 30,528,000 | ຂາຍເປັນ kg (40,000ກີບ) |
| | | ສາມັກຄີ | ຕໍ່າຫູກ | 19 | 19 ເຄືອ | 201 ຜືນ | 152 ຜືນ | 49 ຜືນ | 9,880,000 | 1 ຜືນ 65,000 ກີບ |
| ລວມ: | | | | | | | | | 58,858,000 | |

| ລ/ດ | ຊື່ບ້ານ | ຊື່ກຸ່ມ | ຊື່ ກິດຈະກຳ | ຈ/ນສະມາຊິກ | ການລົງທຶນໃນເບື້ອງຕົ້ນ | ຜົນໄດ້ຮັບແຕ່ຕົ້ນເຖິງປະຈຸບັນ(ສະເລ່ຍ) | ຈ/ນຂາຍອອກແລະບໍລິໂພກ | ຈ/ນສັດຍັງເຫຼືອຕົວຈິງ | ເປັນເງິນ(ກີບ) | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| 4 | ຫ້ວຍສາ | ສູ້ຊີວິນ ດ/ກ | ລ້ຽງໄກ່ | 15 | 375 ໂຕ | 960 ໂຕ | 2,862 kg | 852ໂຕ | 114,450,000 | ຂາຍເປັນ ໂຕ (40,000 ກີບ) |
| | | ສະຫງວນຊ/ຍ | ລ້ຽງປາ | 8 | 48 kg | 960 kg | 850 kg | 110 kg | 25,000,000 | ຂາຍເປັນ kg (30,000ກີບ) |
| | | ສ້າງສາສ/ກ | ລ້ຽງໝູ | 9 | 9 ໂຕ | 72 ໂຕ | 53 ໂຕ | 19 ໂຕ | 26,500,000 | ຂາຍເປັນໂຕ 450,000 ກີບ) |
| ລວມ: | | | | | | | | | 166,060,000 | |

# ສັງລວມ ແຕ່ລະກິດຈະກຳ 4 ບ້ານ ທົດລອງ ຂອງເມືອງ ຮົ້ງມ

| ກິດຈະກຳ | ຈຳນວນກຸ່ມ | ຈ/ນສະມາຊິກ | ຕົ້ນທຶນ | ຜົນໄດ້ຮັບ | ກຳໄລ |
|---|---|---|---|---|---|
| ລ້ຽງປາ | 2 | 25 | 25,840,000 | 49,600,000 | 23,760,000 |
| ລ້ຽງໄກ່ | 5 | 88 | 90,328,000 | 287,024,000 | 196,696,000 |
| ລ້ຽງໝູ | 3 | 45 | 47,286,000 | 85,900,000 | 38,614,000 |
| ລ້ຽງແບ້ | 1 | 20 | 20,740,000 | 14,000,000 | - 6,740,000 |
| ຕ່ຳຫູກ | 3 | 55 | 57,975,000 | 77,790,000 | 19,815,000 |
| ລວມ | 14 | 233 | 242, 169,000 | 514,314,000 | 297,497,000 |
| | | | | | |

❖ ວຽກງານ ການທ້ອນເງິນ 16 ບ້ານ 52 ກຸ່ມ ສະມາຊິກ 772 ຄົນ ຍິງ 463 ຄົນ

| ລ/ດ | ຊື່ກຸ່ມ ບ້ານ | ຊື່ ບ້ານ | ຈ/ນ ກຸ່ມ, ສະມາຊິກ | ລວມເປັນເງິນ |
|---|---|---|---|---|
| 1 | ຫາດ ຣັ້ງມ | ຫ້ວຍສາ | 3 (32 ຄົນ) | 3,173,000 |
| | | ແທ່ນຮົ້ງ | 3 (52 ຄົນ) | 5,294,000 |
| | | ນາວຽງ | 4 (59 ຄົນ) | 4,395,000 |
| | | ທົ່ວພູ | 3 (38 ຄົນ) | 1,520,000 |
| | | ນ້ຳສາດ | 3 (47 ຄົນ) | 1,400,000 |
| | | ນາໂພນ | 3 (47 ຄົນ) | 1,400,000 |
| | | ພຽງໂດນ | 3 (39 ຄົນ) | 624,000 |
| | | ນາປອກ | 3 (37 ຄົນ) | 592,000 |
| ລວມເງິນທ້ອນທັງໝົດ: | | 8 ບ້ານ | 25 ກຸ່ມ | 18,398,000 |
| 2 | ສາກົກ | ສາກົກ | 4 (75 ຄົນ) | 11,560,000 |
| | | ດອນຄູນ | 4 (80 ຄົນ) | 13,495,000 |
| | | ຫາດສາ | 3 (46 ຄົນ) | 736,000 |
| | | ໂພນສະອາດ | 4 (61 ຄົນ) | 976,000 |
| ລວມເງິນທ້ອນທັງໝົດ: | | 4 ບ້ານ | 15 ກຸ່ມ | 26,767,000 |
| 3 | ພັນລໍ | ພຽງດີ | 3 (37 ຄົນ) | 592,000 |
| | | ນາແລ | 3 (40 ຄົນ) | 616,000 |
| | | ໂພນຄຳ | 2 (28 ຄົນ) | 472,000 |
| | | ຄອນງິ້ວ | 4 (58 ຄົນ) | 928,000 |
| ລວມເງິນທ້ອນທັງໝົດ: | | 4ບ້ານ | 12 ກຸ່ມ | 2,608,000 |
| | | ລວມທັງໝົດ: 16 ບ້ານ | 52 ກຸ່ມ | 47,773,000 ກີບ |

# ຮູບກິດຈະກຳປັບປຸງຊີວິດການເປັນຢູ່

































09/07/2013


09/07/2013





## VI. ໜ້າວຽກ ແລະ ຄວາມຄືບໜ້າ ວຽກງານໂພຊະນາການ.

### 1/. ວຽກງານຝຶກອົບຮົມ:

1.1 ໄດ້ຝຶກອົບຮົມ ປຸງແຕ່ງອາຫານ ກາງວັນໃຫ້ກຸ່ມ ພຊກ ໄດ້ 4 ຄັ້ງ , (ບ້ານລະ 1 ຄັ້ງ) ,ມີຜູ້ເຂົ້າຮ່ວມ 86 ຄົນ.

1.2 ໄດ້ເຂົ້າຮ່ວມ ຝຶກອົບຮົມ ຕັດຫຍິບ 1 ຄັ້ງ , ມີຜູ້ເຂົ້າຮ່ວມ 8 ຄົນ (ບ້ານ ລະ 2 ຄົນ) ໄລຍະເວລາຝຶກ 1 ເດືອນ ທີ່ນະຄອນຫຼວງວຽງຈັນ.

1.3 ໄດ້ເຂົ້າຝຶກອົບຮົມ ຄວາມຮູ້ພື້ນຖານດ້ານໂພຊະນາການ 1 ຄັ້ງ (ຜູ້ຮັບຜິດຊອບ ວຽກງານໂພຊະນາການ ກຸ່ມບ້ານ) ມີຜູ້ເຂົ້າຮ່ວມ 7 ຄົນ, ຊາຍ 1 ຄົນ.

1.4 ໄດ້ເຜີຍແຜ່ຄວາມຮູ້ເບື້ອງຕົ້ນດ້ານໂພຊະນາການໃຫ້ ກຸ່ມ ພຊກ ໄດ້ບ້ານ ຫຼາຍ ຄັ້ງ.

1.5 ໄດ້ສາທິດການແຕ່ງກິນໃຫ້ເດັກນ້ອຍ ອາຍຸ 6 ເດືອນ ຫາ 2 ປີ ໄດ້ບ້ານ ຫຼາຍຄັ້ງ.

1.6 ຝຶກອົບຮົມ ການຄຸ້ມຄອງບໍລິຫານ ສພບ ໄດ້ 4 ຄັ້ງ (ບ້ານ ລະ 1 ຄັ້ງ).

### 2/. ວຽກງານການຈັດຕັ້ງປະຕິບັດ.

1. ໃນ 4 ບ້ານ ທົດລອງ ປະຈຸບັນ ໄດ້ສ້າງສູນໂພຊະນາການ 4 ສູນ ກິດຈະກໍາທີ່ໄດ້ເຮັດຜ່ານມາມີ 4 ກິດຈະກໍາຫຼັກຄື: ກິດຈະກໍາ ສ້າງສູນໂພຊະນາການ, ກິດຈະກໍາເຮັດສ່ວນຄົວ, ກິດຈະກໍາປຸງແຕ່ງອາຫານກາງວັນ ແລະ ກິດຈະກໍາ ສ້າງລາຍຮັບ.
2. ໃນ 4 ສູນ ພຊກ ມີ ໝານຜັກ 32 ໝານ. (ຜັກກາດ,ຜັກບົ່ວ,ຜັກຊີ,ຫອມລາບ,ຜັກບົ້ງ, ຫົວຂີງໄຄ, ອື່ນໆ..................).
3. ປຸງແຕ່ງ ອາຫານກາງວັນ 29 ຄັ້ງ ,ມີຜູ້ເຂົ້າຮ່ວມ 802 ຄົນ ໃນນັ້ນມີ ຄະນະບ້ານ 39 ເທື່ອຄົນ, ແມ່ລູກອ່ອນ 235 ເທື່ອຄົນ ແລະ ເດັກນ້ອຍອາຍຸຕໍ່າກວ່າ 2 ປີ 428 ເທື່ອຄົນ.
4. ສ້າງລາຍຮັບຈາກການເຮັດເຂົ້າໜົມ ແລະ ຂາຍຜັກ ໄດ້ 1.250.000 ກີບ. (ລວມ 4 ບ້ານ)

3/. ວຽກງານການປ່ອຍທຶນຊ່ວຍເຫຼືອ.

1.1 ໃນເບື້ອງຕົ້ນ ໂຄງການ ໄດ້ທົດລອງ ຈັດຕັ້ງປະຕິບັດ ຢູ່4 ບ້ານ ມີ 5 ກິດຈະກຳຫຼັກ ໄດ້ປ່ອຍທຶນຊ່ວຍເຫຼືອ ໃຫ້ ກຸ່ມ ພຊກ ທັງໝົດຄື:

- ບ້ານ ສາກົກ 45,176,000 ລ້ານ ກີບ
- ບ້ານ ດອນຄູນ 71,956,000 ລ້ານ ກີບ
- ບ້ານ ຫ້ວຍສ້າ 40,581,000 ລ້ານ ກີບ
- ບ້ານ ແທ່ນຮິ້ງ 47,849,000ລ້ານ ກີບ

ລວມທັງໝົດ: 4 ບ້ານ 205,562,000 ລ້ານ ກີບ

# ຮູບກິດຈະກຳ ໂພຊະນາການ















VII. ຕີລາຄາດ້ານດີ, ດ້ານອອ່ນ, ວິທີແກ້ໄຂ.

1.ດ້ານດີທີ່ພົບເຫັນ.

1. ຍ້ອນມີ ລະບຽບການ, ມີຂັ້ນຕອນ, ປື້ມຄູ່ມືພາກສະໜາມ ໃນການຈັດຕັ້ງປະຕິບັດ ໂຄງການ ຢ່າງລະອຽດ.
2. ຍ້ອນໄດ້ຮັບການຊີ້ນໍາໆພາ ຈາກຜູ້ປະສານງານ ໂຄງການ ຄປພ ຂັ້ນສູນກາງ,ຂັ້ນແຂວງ , ຄະນະຊີ້ນໍາ ຂັ້ນແຂວງ, ຂັ້ນເມືອງ ແລະ ທຸກພາກສ່ວນກ່ຽວຂ້ອງຢ່າງປົກກະຕິ.
3. ພະນັກງານພາຍໃນ ມີຄວາມສາມັກຄີກັນດີ, ມີແບບແຜນການເຮັດວຽກເປັນໝູ່ ຄະນະ, ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.
4. ພະນັກງານແຕ່ລະຄົນມີສະຕິຕໍ່ການຈັດຕັ້ງ, ມີຄວາມເອົາໃຈໃສ່ຕໍ່ໜ້າທີ່ວຽກງານ ຂອງຕົນຕາມການມອບໝາຍ.
5. ອໍານາດການປົກຄອງ ແລະ ພໍ່ແມ່ປະຊາຊົນ ພາຍໃນບ້ານເປົ້າໝາຍແຕ່ລະບ້ານໄດ້ໃຫ້ ຄວາມຮ່ວມມື ນໍາທີມງານ ໂຄງການ ທຸກຄັ້ງ ຢ່າງກົກສຸດປາຍ.
6. ສິ່ງທີ່ເຫັນຊັດ ໃນກຸ່ມ ກຊກ 4 ບ້ານ ເກົ່າ ສັງເກດເຫັນວ່າ ຊີວິດການເປັນຢູ່ ຈໍານວນ ຫຼາຍ ເຫັນວ່ານັບມື້ນັບດີຂື້ນກວ່າເກົ່າ ຖ້າທຽບໃສ່ເມື່ອກ່ອນ(ເພາະວ່າ ເຂົາເຈົ້າມີກົດ ຈະກໍາສ້າງລາຍຮັບປະຈໍາວັນ, ເດືອນ ແລະ ກິນອາຫານທີ່ມີທາດຊີ້ນ,ຜັກ ຫຼາຍຂື້ນ).

2. ດ້ານອ່ອນຄົງຄ້າງ.

2.1 ດ້ານແນວຄວາມຄິດຂອງຊຸມຊົນ ບ້ານເປົ້າໝາຍຈຳນວນໜຶ່ງຍັງມີແນວຄິດຄອງເດີມ,ບໍ່ຢາກຫັນປ່ຽນອາຊີບອື່ນ ຍັງຢຶດຖືເອົາການຖາງປ່າເຮັດໄຮ່ເປັນອາຊີບຕົ້ນຕໍ.

2.2 ພະນັກງານປະຈຳກຸ່ມບ້ານບາງຄົນບໍ່ທັນເອົາໃຈໃສ່ເທົ່າທີ່ຄວນຕໍ່ກັບໜ້າທີ່ວຽກງານທີ່ຕົນຮັບຜິດຊອບຊຶ່ງມັນສະແດງໃນການປະຈຳການ ແລະ ການໃຫ້ຄຳແນະນຳວຽກຊາວບ້ານເຮັດຍັງບໍ່ທັນໄດ້ດີ.

2.3 ພະນັກງານບາງຄົນ ຂາດສະຕິຕໍ່ລະບຽບການເປັນຕົ້ນແມ່ນການໄປມາລາຄອບ, ຄວາມຕື່ນຕົວໃນການພັດທະນາຕົນເອງຍັງມີໜ້ອຍ, ຍັງມີແນວຄິດແບບລໍຖ້າຄຳສັ່ງ, ແນວຄິດຄອນແຄນ, ເຮັດວຽກແບບລໍຖ້າໄປເຮັດວຽກຢູ່ນຳຫ້ອງການອື່ນ.

2.4 ພະນັກງານສ່ວນຫຼາຍຜູ້ທີ່ມີຄວາມຮູ້ຄວາມສາມາດ ຫຼື ໄດ້ຝຶກອົບຮົມວຽກງານ ຕ່າງໆພັດລາອອກໄປເຮັດວຽກຢູ່ບ່ອນໃໝ່ (ຊັບປ່ຽນພະນັກປະຈຳກຸ່ມຕະຫຼອດ)ຊຶ່ງເຮັດໃຫ້ວຽກງານຂາດວັກຂາດຕອນ.

3/. ວິທີແກ້ໄຂ:

3.1 ຜູ້ຮັບຜິດຊອບວຽກງານ ປຊຢ, ພຊກ ຂັ້ນສູນກາງ,ຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງເປັນເຈົ້າການໃນການຊີ້ນຳ,ຕິດຕາມ ພະນັກງານປະຈຳກຸ່ມບ້ານ ຢ່າງໄກ້ຊິດ ແລະ ປົກກະຕິ.

3.2 ພາກລັດທີ່ກ່ຽວຂ້ອງຂັ້ນເມືອງຕ້ອງໄດ້ລົງຊ່ວຍສຶກສາອົບຮົມດ້ານການເມືອງແນວຄິດແກ່ພະນັກງານ ແລະ ຊຸມຊົນຢ່າງທົ່ວເຖິງ.

3.3 ບໍ່ຄວນຮັບເອົາພະນັກງານ ທີ່ເປັນອາສາສະໝັກຢູ່ຫ້ອງການຕ່າງໆເພື່ອລໍຖ້າໂກ້ຕ້າມາເຮັດວຽກນຳ, ແຕ່ຖ້າເປັນລັດຖະກອນແລ້ວແມ່ນເຫັນດີຮັບເອົາ.

## VIII. ແຜນວຽກຕໍ່ໜ້າ:

1/. ວຽກງານປັບປຸງຊີວິດການເປັນຢູ່:

1.1 ສືບຕໍ່ຊຸກຍູ້, ຕິດຕາມ ກິດຈະກຳຍ່ອຍ ໃນ 4 ບ້ານທົດລອງເກົ່າ ແລະ ກະກຽມ ເກັບກູ້ທຶນໝູນວຽນຮອບທີ 1 ແລະ ສືບຕໍ່ປ່ອຍທຶນໝູນວຽນຮອບທີ2 ຕາມ ລະບຽບການທີ່ການົດໄວ້ແຕ່ລະກຸ່ມ.

1.2 ຊຸກຍູ້ສົ່ງເສີມການທ້ອນເງິນ ຂອງ 12 ບ້ານຂະຫຍາຍໃໝ່ ແລະ ຈັດກອງ ປະຊຸມ ປະຈຳເດືອນຢ່າງປົກກະຕິ.

1.3 ຊຸກຍູ້ຕິດຕາມ 12 ບ້ານໃຫ້ມີການ ກະກຽມພື້ນທີ່,ສ້າງຄອກແລະ ອື່ນໆເພື່ອປະຕິ ບັດແຕ່ລະກິດຈະກຳ ຂອງແຕ່ລະກຸ່ມ, ແຕ່ລະຄອບຄົວ ທີ່ໄດ້ຄັດເລືອກເອງ.

1.4 ສືບຕໍ່ກະກຽມປ່ອຍທຶນໝູນວຽນໄລຍະ 2 ແລະ ຝຶກອົບຮົມແຕ່ລະກິດຈະກຳ ໃຫ້ 12 ບ້ານ ກ່ອນການຈັດຕັ້ງປະຕິບັດ.

2/. ວຽກງານ ໂພຊະນາການ:

2.1 ສືບຕໍ່ຕິດຕາມ ການກໍ່ສ້າງສູນໂພຊະນາການ ແລະ ການສ້າງສ່ວນຄົວ ຢູ່ ບ້ານ ດອນຄູນ.

2.2 ສືບຕໍ່ນຳພາ, ຕິດຕາມ ກິດຈະກຳປຸງແຕ່ງອາຫານການອັນ ຂອງ 4 ບ້ານ ທົດລອງ ໂດຍສະເພາະແມ່ນແມ່ຍິງຖືພາ, ແມ່ລູກອອ່ນ, ເດັກນ້ອຍອາຍຸຕ່ຳກວ່າ 2 ປີທີ່ຂາດ ສານອາຫານ ແລະ ຜູ້ທຸກຍາກ ໃຫ້ໄດ້ຢ່າງໜ້ອຍ ທົດລະ 1 ຄັ້ງ.

2.3 ສ້າງແຜນຮ່ວມກັບ ສາທາ ເມືອງ ເພື່ອຕິດຕາມການວັດແທກລວງສູງ, ນ້ຳໜັກ, ອັດຕາການຂາດສານອາຫານຂອງເດັກຢູ່ບ້ານເປົ້າໝາຍຢ່າງທົ່ວເຖິງ.

2.3 ຊຸກຍູ້ບ້ານຂະຫຍາຍໃໝ່ທີ່ມີເປົ້າໝາຍຈະສ້າງສູນໂພຊະນາການ ແລະ ເຮັດສ່ວນ ຄົວ ໃຫ້ມັນເກີດ ແລະ ໃຫ້ໄດ້ຕາມເປົ້າໝາຍ.

## IX. ຂໍ້ສະເໜີ:

1. ສະເໜີໃຫ້ທຸກຂັ້ນ ແລະ ພາກສ່ວນກ່ຽວຂ້ອງຂັ້ນສູນກາງ,ຂັ້ນແຂວງ, ຂັ້ນເມືອງ ສືບຕໍ່ເອົາໃຈໃສ່ ຊ່ວຍໃຫ້ທິດຊີ້ນຳໆພາ, ຕິດຕາມ ການຈັດຕັ້ງປະຕິບັດ ທຸກຂັ້ນຕອນຂອງໂຄງການ ຢ່າງລຽນຕິດ ເພື່ອໃຫ້ໄດ້ຮັບຜົນດີເທື່ອລະກ້າວ.
2. ສະເໜີໃຫ້ຂັ້ນສູນກາງ, ຂັ້ນແຂວງ ຊ່ວຍຄົ້ນຄວ້າປະກອບພາຫານະ(ລົດຈັກ), ອຸປະກອນຮັບໃຊ້ຫ້ອງການທີ່ມີຄວາມຈຳເປັນ ໃຫ້ຄົບຕາມລະບຽບຂອງໂຄງການ.
3. ຊ່ວຍຄົ້ນຄວ້າ ເອົາ ວິຊາການປັບປຸງຊີວິດການເປັນຢູ່ ຂັ້ນເມືອງ ຮັ້ງມ 1 ຕຳແໜງ.
4. ຝຶກອົບດ່ານບັນຊີການເງິນ
5. ຝຶກອົບຮົມສັດຕະວະແພດ